Australian Electoral Commission

Lao/ລາວ

# ແນວປະຕິບັດ ທາງການ ສໍາລັບທ່ານ

## ກ່ຽວກັບ ການເລືອກຕັ້ງ ຣັຖບານກາງ ປີ 2022

**ວັນເສົາທີ 21 ພຶສພາ 2022**

**ການລົງຄະແນນສຽງ ແມ່ນເປັນການບັງຄັບ**

ສໍາລັບຄົນສັນຊາດອອສເຕຣລຽນທຸກ ຄົນທີ່ອາຍຸ 18 ປີ ແລະ ຫຼາຍກວ່ານັ້ນ.



## ການເລືອກຕັ້ງຂອງທ່ານຈະຊ່ວຍສ້າງປະ ເທດອອສເຕຣເລັຍໃຫ້ເຂົ້າຮູບຮ່າງ

# ຂໍ້ຄວາມຈາກ
## ອະທິບໍດີ ຄະນະກັມມາທິການ ການເລືອກຕັ້ງ

AEC ໄດ້ສ້າງແນບປະຕິບັດນີ້ຂຶ້ນມາເພື່ອຊ່ວຍໃຫ້ທ່ານວາງແຜນສຳລັບການລົງຄະແນນສຽງຂອງທ່ານໃນການເລືອກຕັ້ງຂອງຣັຖບານກາງນີ້. ແນວປະຕິ ບັດນີ້ໃຫ້ລາຍລະອຽດວິທີການລົງຄະແນນສຽງຢ່າງຖືກຕ້ອງ, ສິ່ງທີ່ເກີດຂຶ້ນຢູ່ໃນບ່ອນປ່ອນບັດ, ຄຳຖາມທີ່ຖືກຖາມເລື້ອຍໆແລະຄຳແນະນຳກ່ຽວກັບວິທີການກວດສອບແຫຼ່ງຂໍ້ມູນ.

ພວກເຮົາຈະເປີດບ່ອນປ່ອນບັດໃນທົ່ວປະເທດໃນວັນເລືອກຕັ້ງ, ພ້ອມທັງທາງເລືອກການລົງຄະແນນສຽງແບບອື່ນໆເພື່ອສະໜັບສະໜູນໃຫ້ບັນດາຊຸມຊົນໄດ້ອອກຄວາມເຫັນຂອງພວກເຂົາ.

**ທ່ານສາມາດມີຄວາມໝັ້ນໃຈວ່າ:**

- ພວກເຮົາກຳລັງດຳເນີນຕາມຂະບວນການການເລືອກຕັ້ງດ້ວຍ**ຄວາມຊື່ສັດ**, ຮັບປະກັນການລົງຄະແນນສຽງຂອງທ່ານໃນທຸກຂັ້ນຕອນຂອງຂະບວນການ – ຕັ້ງແຕ່ການພິມຈົນຮອດການນັບບັດລົງຄະແນນສຽງຂອງທ່ານ.
- **ສຸຂະພາບ ແລະຄວາມປອດໄພຂອງທ່ານ**, ແລະຂອງພະນັກງານກຳກັບການເລືອກຕັ້ງຂອງພວກເຮົາ, ແມ່ນບູລິມະສິດ ແລະຈະມີການນຳໃຊ້ມາດຕະການຄວາມປອດໄພຂອງ COVID-19 ຢ່າງຫຼາກຫຼາຍ.

ການແລກປ່ຽນຄວາມຄິດເຫັນທີ່ເຂັ້ມແຂງແມ່ນສ່ວນໜຶ່ງຂອງການໂຄສະນາການເລືອກຕັ້ງ, ແລະຂ້າພະເຈົ້າຂໍແນະນຳໃຫ້ທ່ານພິຈາລະນາຢ່າງລະອຽດກ່ຽວກັບຂໍ້ມູນທັງໝົດທີ່ທ່ານໄດ້ຮັບ, ແຕ່ໂດຍສະເພາະແລ້ວແມ່ນສິ່ງໃດກໍຕາມທີ່ຕັ້ງຄຳຖາມກ່ຽວກັບຂະບວນການເລືອກຕັ້ງຂອງພວກເຮົາ. **ຖາມຕົວເອງວ່າມັນມາຈາກແຫຼ່ງທີ່ເປັນທີ່ຮູ້ຈັກ ແລະເຊື່ອຖືໄດ້ບໍ**. ຖ້າຄຳຕອບແມ່ນ ບໍ່, ຄຳແນະນຳຂອງຂ້າພະເຈົ້າແມ່ນໃຫ້ລະມັດລະວັງ.

ເຂົ້າຢ້ຽມເບິ່ງເວັບໄຊຕ໌ຂອງ **aec.gov.au** ເພື່ອເອົາຂໍ້ມູນເພີ້ມເຕີມກ່ຽວກັບວ່າທ່ານຈະສາມາດສະແດງຄວາມຄິດໄດ້ຢ່າງໃດກ່ຽວກັບການເລືອກຕັ້ງນີ້.

**ທອມ ໂຣເຈີຣ໌**
ອະທິບໍດີ ຄະນະກັມມາທິການ ການເລືອກຕັ້ງ

ຫຼາຍກວ່າ **96%** ຢູ່ໃນບັນຊີຊື່ການປ່ອນບັດເລືອກຕັ້ງ

ບ່ອນປ່ອນບັດ ຫຼາຍກວ່າ **7000** ບ່ອນ

ສູນປ່ອນບັດລ່ວງໜ້າຫຼາຍກວ່າ**500** ບ່ອນ

ມີເຈົ້າໜ້າທີ່ຮັບຜິດຊອບການເລືອກຕັ້ງຊົ່ວຄາວຫຼາຍກວ່າ **100,000** ຄົນ

# ຢຸດ ແລະ ພິຈາຣະນາ
## ກວດເບິ່ງແຫຼ່ງທີ່ມາຂອງການເລືອກຕັ້ງຣັຖບານກາງນີ້

ໃນຊ່ວງລະຍະລະຫວ່າງການເລືອກຕັ້ງ, ຂໍ້ມູນຈຳນວນຫຼວງຫຼາຍຖືກແຈກຢາຍ, ຊຶ່ງຕ້ອງການໂນ້ມນ້າວການລົງຄະແນນສຽງຂອງທ່ານ.

ນີ້ເປັນສ່ວນສຳຄັນຂອງຂະບວນການປະຊາທິປະໄຕ. ມັນຊ່ວຍເຮັດໃຫ້ຜູ້ສະໝັກ, ພັກການເມືອງ ແລະ ຄົນອື່ນໆມີຊ່ອງທາງສື່ສານນະໂຍບາຍ ແລະຄວາມເຊື່ອຂອງພວກເຂົາກັບຜູ້ມີສິດລົງຄະແນນສຽງ.

ເຖິງຢ່າງໃດກໍ່ຕາມ, ຂໍ້ມູນບາງຢ່າງອາດບໍ່ຖືກຕ້ອງໂດຍເຈດຕະນາ ຫຼື ເຮັດໃຫ້ເຂົ້າໃຈຜິດ.

ມັນເປັນສິ່ງສຳຄັນທີ່ທ່ານຕ້ອງພິຈາລະນາຢ່າງລະມັດລະວັງໃນສິ່ງທີ່ທ່ານເຫັນ, ໄດ້ຍິນຫຼືອ່ານກ່ຽວກັບການເລືອກຕັ້ງຂອງຣັຖບານກາງ.

ໃຊ້ເວລາພິຈາລະນາວ່າ ຂໍ້ມູນແມ່ນ:

- ມາຈາກແຫຼ່ງທີ່ເຊື່ອຖືໄດ້ ຫຼື ເປັນທີ່ຮູ້ຈັກ
- ປະຈຸບັນ
- ປອດໄພ (ບໍ່ແມ່ນການຫຼອກລວງ).

ນີ້ເປັນສິ່ງສຳຄັນໂດຍສະເພາະໃນເວລາທີ່ຢູ່ໃນສື່ມວນຊົນສັງຄົມແລະອອນໄລນ໌.

ເຂົ້າໄປເບິ່ງທີ່ **aec.gov.au/stopandconsider** ເພື່ອເອົາຂໍ້ມູນເພີ້ມເຕີມ ແລະວີດີໂອສັ້ນໆທີ່ມີຄຳແນະນຳທີ່ເປັນປະໂຫຍດ.



# ວັນເລືອກຕັ້ງແມ່ນ ວັນເສົາ ທີ 21 ພຶສພາ 2022

## ສະຖານທີ່ປ່ອນບັດເປີດເວລາ 8 ໂມງເຊົ້າ ແລະ ປິດເວລາ 6 ໂມງແລງຕົງ.

ການເລືອກຕັ້ງຂອງຣັຖບານກາງແມ່ນຈັດຂຶ້ນເພື່ອໃຫ້ຊາວອອສເຕຣລຽນສາມາດເລືອກເອົາສະມາຊິກສະພາຕ່ຳ ແລະ ສະພາສູງເພື່ອເປັນຕົວແທນຄວາມຄິດເຫັນແລະຜົນປະໂຫຍດຂອງພວກເຂົາຢູ່ໃນສະພາ.

### ໃຜຕ້ອງລົງຄະແນນສຽງເລືອກຕັ້ງ?

ຄົນສັນຊາດອອສເຕຣລຽນທຸກຄົນໝົດທີ່ມີອາຍຸ 18 ປີຂຶ້ນໄປແມ່ນຕ້ອງລົງທະບຽນເພື່ອລົງຄະແນນສຽງໃນການເລືອກຕັ້ງຂອງຣັຖບານກາງ.

### ຂ້ອຍຈະໄປປ່ອນບັດໄດ້ຢູ່ໃສ?

ທ່ານສາມາດລົງຄະແນນສຽງໄດ້ຢູ່ບ່ອນປ່ອນບັດໃນຣັດ ຫຼື ອານາເຂດຂອງທ່ານໃນວັນເລືອກຕັ້ງ. ສະຖານທີ່ປ່ອນບັດເປີດແຕ່ 8 ໂມງເຊົ້າຫາ 6 ໂມງແລງ.

ຕາມປົກກະຕິແລ້ວ ສະຖານທີ່ປ່ອນບັດມັກຈະຕັ້ງຢູ່ໃນໂຮງຮຽນ, ໂບດ ແລະ ສູນຊຸມຊົນໃນທ້ອງຖິ່ນ, ຫຼື ອາຄານສາທາລະນະຕ່າງໆ. ເພື່ອຊອກຫາສະຖານທີ່ປ່ອນບັດທີ່ໃກ້ທີ່ສຸດຂອງທ່ານ, ໃຫ້ເຂົ້າໄປເບິ່ງທີ່ **aec.gov.au/where**

ຖ້າທ່ານມີຄວາມຈຳກັດດ້ານການເຄື່ອນໄຫວ ຫຼື ຄວາມພິການ, ຫຼື ເບິ່ງແຍງຜູ້ທີ່ມີ, ທ່ານສາມາດກວດເບິ່ງລາຍລະອຽດການເຂົ້າຫາສະຖານທີ່ປ່ອນບັດໄດ້ທີ່ **aec.gov.au/where**

ການເລືອກວິທີປ່ອນບັດເລືອກຕັ້ງສຳລັບຜູ້ຕາບອດ ຫຼື ສາຍຕາບໍ່ດີ ນັ້ນ ຈົ່ງເຂົ້າເບິ່ງ **aec.gov.au/assistance** ຫຼືໂທຫາເບີ **13 23 26.**

### ຈະເປັນແນວໃດຖ້າຂ້ອຍຢູ່ໃນຣັດຫຼື ອານາເຂດອື່ນ?

ຖ້າທ່ານຈະຢູ່ຕ່າງຣັດໃນມື້ເລືອກຕັ້ງ ທ່ານສາມາດປ່ອນບັດໄດ້ຕາມສູນປ່ອນບັດທີ່ຈັດໄວ້ໃນຕ່າງຣັດ, ຫຼື ພິຈາຣະນາເບິ່ງທາງເລືອກໃນການປ່ອນບັດລ່ວງ ໜ້າຕາມຂ້າງລຸ່ມນີ້.

### ຖ້າຂ້ອຍບໍ່ສາມາດປ່ອນບັດໃນວັນເລືອກຕັ້ງເດ?

ຖ້າທ່ານບໍ່ສາມາດໄປປ່ອນບັດຢູ່ສະຖານທີ່ປ່ອນບັດຢູ່ໃນຣັດຫຼືອານາເຂດຂອງທ່ານໃນມື້ເລືອກຕັ້ງໄດ້ ທ່ານອາດມີສິດປ່ອນບັດກ່ອນກໍໄດ້ໂດຍຕົວເອງ ຫຼື ໂດຍທາງໄປສະນີ.

#### ວິທີການປ່ອນບັດລ່ວງໜ້າດ້ວຍຕົນເອງ

ຖ້າທ່ານມີສິດ, ທ່ານສາມາດປ່ອນບັດກ່ອນມື້ເລືອກຕັ້ງໄດ້. ສູນປ່ອນບັດລ່ວງໜ້າເປີດຕັ້ງແຕ່ **ວັນຈັນທີ 9 ເດືອນພຶສພາ 2022.** ວັນທີ ແລະ ເວລາເປີດແມ່ນແຕກຕ່າງກັນ, ສະນັ້ນ ກະລຸນາເຂົ້າໄປເບິ່ງທີ່ **aec.gov.au/where** ເພື່ອກວດເບິ່ງລາຍລະອຽດຂອງແຕ່ລະສູນ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການລົງຄະແນນສຽງລ່ວງໜ້າ ແລະເພື່ອກວດເບິ່ງວ່າທ່ານມີສິດຫຼືບໍ່, ກະລຸນາເຂົ້າໄປທີ່ **aec.gov.au/early** ຫຼືໂທຫາ ເບີ **13 23 26.**

#### ວິທີລົງຄະແນນສຽງລ່ວງໜ້າທາງໄປສະນີ

ການລົງຄະແນນທາງໄປສະນີແມ່ນມີໃຫ້ຜູ້ມີສິດເລືອກຕັ້ງ. ກວດເບິ່ງການມີສິດຂອງທ່ານແລະຂໍເຮັດທາງອອນໄລນ໌ທີ່ **aec.gov.au/pva**

ຂຽນຕື່ມຟອມຂໍການລົງຄະແນນສຽງທາງໄປສະນີຂອງທ່ານເພື່ອໃຫ້ມັນໄປຮອດ AEC **ບໍ່ໃຫ້ຊ້າກວ່າ 6 ໂມງແລງຂອງວັນພຸດທີ 18 ພຶສພາ 2022.**

ຈົ່ງໂທຫາເບີ **13 23 26** ຖ້າທ່ານເຮັດທາງອອນໄລນ໌ບໍ່ໄດ້ແລະຕ້ອງການຂໍເຮັດການລົງຄະແນນສຽງທາງໄປສະນີ.

### ຂ້ອຍຢູ່ໃນເຂດການເລືອກຕັ້ງໃດ?

ທ່ານສາມາດກວດເບິ່ງວ່າທ່ານອາໄສຢູ່ໃນເຂດການເລືອກຕັ້ງໃດ ໄດ້ທີ່ **aec.gov.au/electorate**

ຖ້າທ່ານອາໄສຢູ່ໃນ **ແວັສເທີນ ອອສເຕຣເລັຍ** ຫຼືວິກຕໍເຣັຍ, ຊື່ ຫຼື ເຂດແບ່ງຂອງການເລືອກຕັ້ງຂອງທ່ານອາດຈະມີການປ່ຽນແປງໄປນັບຕັ້ງແຕ່ການເລືອກຕັ້ງຂອງຣັຖບານກາງຄັ້ງຫຼ້າສຸດທີ່ເປັນຜົນມາຈາກການແຈກແບ່ງໃໝ່. ທ່ານອາດຈະຕ້ອງໄດ້ລົງຄະແນນສຽງໃນເຂດທີ່ແຕກຕ່າງ, ຫຼື ສະຖານທີ່ເລືອກຕັ້ງປົກກະຕິຂອງທ່ານອາດຈະຢູ່ໃນເຂດທີ່ແຕກຕ່າງໄປ.

### ທ່ານຈະລົງຄະແນນສຽງໃຫ້ໃຜເປັນການຕັດສິນໃຈຂອງທ່ານ

ຢູ່ຂ້າງນອກຂອງສະຖານທີ່ປ່ອນບັດບັນດາຜູ້ຕ່າງ ໜ້າຂອງຜູ້ມີຊື່ລົງສະໝັກອາດຈະສະເໜີເຈັ້ຍ ບອກ-ວິທີ-ເລືອກຕັ້ງ ໃຫ້ທ່ານເພື່ອແນະນຳໃຫ້ທ່ານປ່ອນບັດລົງຄະແນນໃນທາງສະເພາະໃດນຶ່ງ. ທ່ານບໍ່ຈຳເປັນຕ້ອງຮັບເອົາ ຫຼື ເຮັດຕາມເຈັ້ຍບອກ-ວິທີ-ເລືອກຕັ້ງ ນັ້ນ.

ມີຄຳຖາມອື່ນບໍ? ເຂົ້າໄປເບິ່ງທີ່ **aec.gov.au/faqs**



# ຈະເຮັດແນວໃດເພື່ອໃຫ້ຄະແນນຂອງທ່ານຖືກນັບ

ໃນວັນເລືອກຕັ້ງ ທ່ານຈະໄດ້ຮັບໃບລົງຄະແນນສຽງສອງໃບ, ໃບສີຂຽວ ສໍາລັບ ສະມາຊິກສະພາຕໍ່າ ແລະໃບໃຫຍ່ຂາວສໍາລັບ ສະພາສູງ. **ທ່ານຕ້ອງຂຽນຕື່ມເຈັ້ຍລົງຄະແນນທັງສອງໃບ.** ຢູ່ເຈັ້ຍລົງຄະແນນສີຂຽວ ທ່ານລົງຄະແນນເລືອກເອົາຜູ້ຕ່າງໜ້າຂອງເຂດທ້ອງຖິ່ນຂອງທ່ານ ຫຼື ເຂດເລືອກຕັ້ງ ຂອງທ່ານໃຫ້ເຂົ້າໄປຢູ່ໃນສະພາຕໍ່າ. ຢູ່ເຈັ້ຍລົງຄະແນນສີຂາວ ທ່ານລົງຄະແນນເລືອກເອົາຜູ້ຕ່າງໜ້າຂອງຣັດ ຫຼື ອານາເຂດຂອງທ່ານໃຫ້ເຂົ້າ ໄປຢູ່ໃນ ສະພາສູງ.

## ສະພາຕໍ່າ

ຢູ່ໃນເຈ້ຍລົງຄະແນນສີຂຽວ, **ໃຫ້ໝາຍເລກໃສ່ ໝົດທຸກໆປ່ອງ** ຕາມລໍາດັບຄວາມມັກຂອງທ່ານ.




ຕົວຢ່າງເຈັ້ຍລົງຄະແນນສຽງ

**ຢ່າເປັນກັງວົນຖ້າທ່ານເຮັດຜິດ.** ທ່ານສາມາດຂໍເອົາເຈັ້ຍລົງຄະແນນໃບໃໝ່ ແລະ ເລີ່ມຕົ້ນຂຽນໃໝ່ອີກ.

## ສະພາສູງ

ຢູ່ເຈັ້ຍລົງຄະແນນສີຂາວນັ້ນ ທ່ານມີສອງທາງເລືອກ ໃນ ການລົງຄະແນນ.

**ເລືອກເອົາ**

### ຂ້າງເທິງເສັ້ນ

ຖ້າທ່ານເລືອກວ່າຈະລົງຄະແນນຢູ່ຂ້າງເທິງເສັ້ນ **ທ່ານຕ້ອງໝາຍເລກໃສ່ຢ່າງໜ້ອຍ 6 ປ່ອງ**.

ໝາຍເລກ '1' ໃສ່ຢູ່ໃນປ່ອງສໍາລັບຊື່ພັກ ຫຼື ກຸ່ມທີ່ເປັນຄວາມມັກທີນຶ່ງຂອງທ່ານ, ໝາຍເລກ '2' ສໍາລັບການເລືອກທີ່ທ່ານມັກເປັນທີສອງ ແລະ ຕໍ່ໆໄປຈົນກວ່າທ່ານຈະໄດ້ໃສ່ເລກໃນ 6ປ່ອງເປັນຢ່າງຕໍ່າ. ທ່ານສາມາດສືບຕໍ່ການໝາຍເລກໃສ່ໃນປ່ອງຕາມລໍາດັບຄວາມມັກຂອງທ່ານ ໄປອີກ ຫຼາຍເທົ່າທີ່ທ່ານຕ້ອງການ.




ຕົວຢ່າງເຈັ້ຍລົງຄະແນນສຽງ

**ຫຼື**

### ຂ້າງລຸ່ມເສັ້ນ

ຖ້າທ່ານເລືອກການລົງຄະແນນຢູ່ຂ້າງລຸ່ມເສັ້ນ ທ່ານຕ້ອງ**ໝາຍເລກໃສ່ 12 ປ່ອງເປັນຢ່າງຕໍ່າ,** ຈາກ 1 ຫາ 12, ສໍາລັບຜູ້ລົງສະໝັກເລືອກຕັ້ງແຕ່ລະຄົນຕາມລໍາດັບຄວາມມັກຂອງທ່ານ. ທ່ານສາມາດສືບຕໍ່ໝາຍເລກໃສ່ໃນປ່ອງຢູ່ຂ້າງລຸ່ມເສັ້ນຕາມລໍາດັບຄວາມມັກຂອງທ່ານຫຼາຍເທົ່າທີ່ທ່ານຕ້ອງການ.




ຕົວຢ່າງເຈັ້ຍລົງຄະແນນສຽງ

ທ່ານເຄີຍຮູ້ບໍ່ວ່າ ທ່ານສາມາດເຝິກຫັດການລົງຄະແນນເລືອກຕັ້ງໄດ້ທີ່ເວັບໄຊຕ໌ຂອງ AEC? ເປີດໄປເບິ່ງທີ່: **aec.gov.au/practise**

# ທ່ານສາມາດເຮັດຫຍັງໄດ້ແດ່
## ເພື່ອວາງແຜນກ່ອນໄປລົງຄະແນນສຽງ

BE COVIDSAFE

ທ່ານສາມາດໃຊ້ມາດຕະການຕ່າງໆເພື່ອຮັກສາຕົວທ່ານເອງແລະຄົນອື່ນໃຫ້ປອດໄພໃນຂະນະທີ່ລົງຄະແນນສຽງ.

- **ມີອາການຕ່າງໆ ຂອງ COVID-19 ບໍ? ຂອບໃຈທີ່ບໍ່ໄດ້ໄປບ່ອນປ່ອນບັດ.**
- ຖ້າບໍ່ສະບາຍ, ທ່ານອາດຈະມີສິດຂໍລົງຄະແນນສຽງທາງໄປສະນີ. ທ່ານສາມາດຂໍທາງອອນໄລນ໌ໄດ້ທີ່ **aec.gov.au/pva** ຈົນຮອດ **6ໂມງແລງ ວັນພຸດວັນທີ 18 ພຶສພາ 2022.**
- ເຮັດການຄົ້ນຄວ້າຂອງທ່ານກ່ຽວກັບຜູ້ລົງສະໝັກແລະຄວາມມັກກ່ອນທີ່ຈະໄປບ່ອນປ່ອນບັດ. ລາຍຊື່ຜູ້ສະໝັກມີຢູ່ທີ່ **aec.gov.au/election/candidates.htm**
- ຖ້າເປັນໄປໄດ້ ພຽງແຕ່ຜູ້ປ່ອນບັດເລືອກຕັ້ງແທ້ໆເທົ່ານັ້ນທີ່ຄວນຢູ່ບ່ອນປ່ອນບັດ.
- ຫຼີກເວັ້ນການພົບປະສັງສັນແລະໃຊ້ເວລາຫຼາຍຢູ່ໃນ ຫຼື ອ້ອມໆສະຖານທີ່ປ່ອນບັດ

ເຂົ້າໄປເບິ່ງທີ່ **aec.gov.au/covid-safety** ເພື່ອເອົາຂໍ້ມູນ ແລະ ຄຳແນະນຳທີ່ອັບເດດ

# ມີຫຍັງເກີດຂຶ້ນຢູ່ບ່ອນປ່ອນບັດເລືອກຕັ້ງ?

### ຂັ້ນຕອນການລົງຄະແນນສຽງ

1. ເຈົ້າໜ້າທີ່ຈະຖາມທ່ານເຖິງຊື່ເຕັມແລະທີ່ຢູ່ຂອງ ທ່ານ ແລະ ຈະຖາມວ່າທ່ານໄດ້ປ່ອນບັດມາກ່ອນແລ້ວບໍໃນການເລືອກຕັ້ງຣັຖບານກາງຄັ້ງນີ້. ພວກເຂົາຈະຂີດຊື່ທ່ານອອກຈາກບັນຊີລາຍຊື່ເລືອກຕັ້ງ
2. ທ່ານຈະໄດ້ຮັບເຈັ້ຍລົງຄະແນນ
3. ຢູ່ທີ່ຕູ້ຂຽນຕື່ມບັດລົງຄະແນນ ຈົ່ງອ່ານຄຳແນະນຳທີ່ຢູ່ໃນເຈັ້ຍລົງຄະແນນທັງສອງໃບໃຫ້ດີໆ ຫຼື ຂໍຄວາມຊ່ວຍເຫຼືອຈາກເຈົ້າໜ້າທີ່ຮັບຜິດຊອບການເລືອກຕັ້ງ
4. ຂຽນຕື່ມເຈັ້ຍລົງຄະແນນຂອງທ່ານ
5. ຈົ່ງພັບແລ້ວເອົາໃສ່ໃນກ່ອງທີ່ມີໄວ້ໃຫ້ຖືກຕ້ອງ.

### ມີການໃຊ້ມາດຕະການຄວາມປອດໄພ COVID-19

- ອາດຈະມີການຈຳກັດຈຳນວນຜູ້ລົງຄະແນນສຽງພາຍໃນບ່ອນປ່ອນບັດໃນເວລາໃດນຶ່ງ. ທ່ານອາດຈະຖືກຂໍໃຫ້ເຂົ້າຄິວຢູ່ຂ້າງນອກ.
- ຮັກສາລະຍະຫ່າງ 1.5 ແມັດຈາກຜູ້ອື່ນທັງພາຍນອກ ແລະ ພາຍໃນ, ແລະ ໃນບ່ອນປ່ອນບັດໃຫ້ປະຕິບັດຕາມເຄື່ອງໝາຍຢູ່ຕາມພື້ນເປັນແນວປະຕິບັດ.
- ເຊັກອິນໂດຍໃຊ້ລະຫັດ QR ຫຼື ດ້ວຍຕົນເອງ.
- ປະຕິບັດຕາມຂໍ້ກຳນົດຂອງການໃສ່ຫນ້າກາກໃນພື້ນທີ່ຂອງທ່ານ.
- ໃຊ້ນ້ຳຢາລ້າງມືທີ່ມີໄວ້ໃຫ້.
- ຕູ້ລົງຄະແນນສຽງ ແລະສໍຈະຖືກທຳຄວາມສະອາດເປັນປະຈຳ. ເອົາປາກກາຫຼືສໍຂອງທ່ານເອງໄປນຳຖ້າຫາກວ່າທ່ານຕ້ອງການ, ແຕ່ຢ່າປະໄວ້ທາງຫລັງ.



**ໃຫ້ຢູ່ເຮືອນຫາກທ່ານມີອາການຂອງ COVID-19**



**ປົກປິດການໄອ ແລະ ຈາມຂອງທ່ານ**



**ກວດເບິ່ງຂໍ້ກຳນົດການໃສ່ໜ້າກາກໃນທ້ອງຖິ່ນ**




**ຢືນຫ່າງກັນ 1.5 ແມັດ**



**ໃຊ້ນ້ຳຢາລ້າງມືທີ່ມີໄວ້ໃຫ້**

ມັນເປັນສິ່ງສຳຄັນໃນການປະຕິບັດຕາມຂໍ້ແນະນຳ ດ້ານສຸຂະພາບກ່ຽວກັບ COVID-19 ຂອງຣັຖບານໃນຣັດ ແລະອານາເຂດທ້ອງຖິ່ນຂອງທ່ານ. ລິ້ງຄ໌ທີ່ເຊື່ອມຕໍ່ໄປຫາຂໍ້ແນະນຳເຫຼົ່ານີ້ແມ່ນຢູ່ທີ່ **aec.gov.au/covid-safety**

ຂໍ້ມູນໃນແນວປະຕິບັດນີ້ສະທ້ອນເຖິງສະຖານະການໃນເວລາພິມ. AEC ຈະສືບຕໍ່ປະຕິບັດຕາມຄຳແນະນຳຈາກອຳນາດການປົກປ້ອງສຸຂະພາບຂອງຣັຖບານກາງແລະຣັດ, ແລະທຸກມາດຕະການທີ່ຖືກອັບເດດຈະຢູ່ໃນເວັບໄຊຕ໌ຂອງເຮົາ.

# ແນວປະຕິບັດ ທາງການ ສຳລັບທ່ານ
## ກ່ຽວກັບ ການເລືອກຕັ້ງ ຣັຖບານກາງ ປີ 2022
### ວັນເສົາທີ 21 ພຶສພາ 2022

# ແນວປະຕິບັດໃນຮູບແບບອື່ນໆ

### ຂໍ້ມູນໃນຮູບແບບທີ່ສາມາດເຂົ້າເຖິງໄດ້

ທ່ານສາມາດດາວໂຫຼດເອົາແນວປະຕິບັດນີ້ໃນຮູບແບບ ອື່ນໆ ເຊັ່ນທາງສຽງຟັງ ແລະ ໂຕໜັງສືໃຫຍ່ໄດ້ຈາກ **aec.gov.au/assistance**

ໂຕໜັງສືສຳລັບຄົນຕາບອດກໍມີໄວ້ໃຫ້ຕາມຄຳຂໍດ້ວຍການໂທຫາເບີ **13 23 26.**

ຖ້າທ່ານຫູໜວກ ຫຼື ມີຄວາມພິການທາງຫູ ຫຼື ການເວົ້າ ຈົ່ງຕິດຕໍ່ຫາພວກເຮົາຜ່ານ National Relay Service (NRS) (ບໍຣິການຖ່າຍທອດແຫ່ງຊາດ):

- ຜູ້ໃຊ້ TTY ຈົ່ງໂທຫາເບີ **13 36 77** ແລ້ວບອກເບີ **13 23 26.**
- ຜູ້ເວົ້າ ແລະ ຟັງ ໂທຫາເບີ **1300 555 727** ແລ້ວບອກ ເບີ **13 23 26.**
- ຜູ້ທີ່ໃຊ້ອິນເຕີເນັດ ຕໍ່ເຂົ້າຫາ NRS ແລ້ວຂໍເອົາ ເບີ **13 23 26.**
- ບໍລິການ ແປພາສາ Auslan (ພາສາມື) ກໍຈະມີໄວ້ໃຫ້. ຈົ່ງເຂົ້າເບິ່ງເວັບໄຊຕ໌ຂອງ AEC ເພື່ອຂໍ້ມູນເພີ້ມເຕີມ.

### ຂໍ້ມູນເປັນພາສາອື່ນໆ

**ແນວປະຕິບັດສະບັບນີ້ທີ່ແປໄວ້ແລ້ວ ເປັນ 33 ພາສາ ສາມາດດາວໂຫຼດເອົາໄດ້ຈາກ aec.gov.au/translated**

ບໍຣິການ ນາຍພາສາທາງໂທຣະສັບກໍມີໄວ້ໃຫ້.ສຳລັບຂໍ້ມູນກ່ຽວກັບການປ່ອນບັດ ແລະ ການເລືອກຕັ້ງ ຈົ່ງໂທຫາໝາຍເລກ **1300 720 153** ແລ້ວຂໍເອົານາຍພາສາ ລາວ.




ການປ່ອນບັດເລືອກຕັ້ງແມ່ນເປັນການບັງຄັບສຳລັບຄົນສັນຊາດອອສເຕຣລຽນທີ່ມີອາຍຸ 18ປີ ຂຶ້ນໄປ. ຖ້າທ່ານບໍ່ປ່ອນບັດເລືອກຕັ້ງ, ທ່ານອາດຈະຖືກລົງໂທດ. ຖ້າທ່ານປ່ອນບັດຫຼາຍກວ່ານຶ່ງຄັ້ງຖືວ່າເປັນຄວາມຜິດທາງອາຊຍາກັມ.



ໄດ້ຮັບການອະນຸມັດຈາກ ອະທິບໍດີ ຄະນະກັມມາທິການ ການເລືອກຕັ້ງ, 10 Mort Street, Canberra.
Authorised by the Electoral Commissioner, 10 Mort Street, Canberra.